ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເລກທີ 2347/ກຕສ

ນະຄອນຫຼວງວຽງຈັນ, ວັນທີ 30 ສິງຫາ 2023

# ຂໍ້ຕົກລົງ

## ວ່າດ້ວຍການຂຶ້ນທະບຽນເລກໝາຍໂທລະສັບ

- ອີງຕາມກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ ເລກທີ 05/ສພຊ, ວັນທີ 16 ພະຈິກ 2021;
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເລກທີ 625/ນຍ, ວັນທີ 22 ຕຸລາ 2021;
- ອີງຕາມແຈ້ງການ ຂອງຫ້ອງວ່າການລັດຖະບານ ວ່າດ້ວຍການອະນຸມັດອອກຂໍ້ບັງຄັບຂຶ້ນທະບຽນຜູ້ຊົມໃຊ້ເລກໝາຍໂທລະສັບທົ່ວປະເທດ ເລກທີ 366/ສນຍ, ວັນທີ 06 ກັນຍາ 2018;
- ອີງຕາມຄຳເຫັນຊີ້ນຳໃນກອງປະຊຸມ ຄະນະປະຈຳພັກ ຄັ້ງວັນທີ 28 ສິງຫາ 2023;
- ອີງຕາມໜັງສືສະເໜີ ຂອງອົງການດັດສົມໂທລະຄົມມະນາຄົມ ເລກທີ 912/ອດທ ວັນທີ 29 ສິງຫາ 2023.

**ລັດຖະມົນຕີ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ອອກຂໍ້ຕົກລົງ:**

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ແລະ ວິທີການ ກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ, ຜູ້ນຳໃຊ້ເລກໝາຍໂທລະສັບ ເພື່ອຂຶ້ນທະບຽນເຂົ້າໃນລະບົບຖານຂໍ້ມູນໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ ແນໃສ່ໃຫ້ເປັນຂໍ້ມູນພື້ນຖານໃນການສ້າງ ເລກລະຫັດດີຈີຕ່ອນ, ຮອງຮັບການນຳໃຊ້ໃນລະບົບເຕັກໂນໂລຊີດີຈີຕ່ອນ, ຮັບປະກັນໄດ້ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພຂອງສັງຄົມ.

### ມາດຕາ 2 ການຂຶ້ນທະບຽນເລກໝາຍໂທລະສັບ

ການຂຶ້ນທະບຽນເລກໝາຍໂທລະສັບ ແມ່ນ ການບັນທຶກຂໍ້ມູນຂອງຜູ້ນຳໃຊ້ເລກໝາຍໂທລະສັບ ທັງທີ່ເປັນແບບລາຍເດືອນ ແລະ ແບບຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເລກໝາຍໂທລະສັບ** ໝາຍເຖິງ ຕົວເລກທີ່ມີຄວາມໝາຍບົ່ງບອກເຖິງ ລະຫັດປະເທດ, ລະຫັດແຂວງ, ລະຫັດເຄືອຂ່າຍໂທລະຄົມມະນາຄົມ ແລະ ເລກໝາຍຂອງຜູ້ນຳໃຊ້;

2. **ຜູ້ນຳໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ນຳໃຊ້ເລກໝາຍໂທລະສັບ ເພື່ອໃຊ້ການບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ມີອາຍຸ 15 ປີຂຶ້ນໄປ;

3. **ຜູ້ໃຫ້ບໍລິການ** ໝາຍເຖິງ ຜູ້ໃຫ້ບໍລິການ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ມີການນຳໃຊ້ເລກໝາຍໂທລະສັບ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. **ປ້ອງບໍລິການຂອງຜູ້ໃຫ້ບໍລິການ** ໝາຍເຖິງ ຫ້ອງການ ຫຼື ສະຖານທີ່ ທີ່ໄດ້ຮັບສິດ ແລະ ພັນທະຈາກຜູ້ໃຫ້ບໍລິການໃນການຈຳໜ່າຍ ແລະ ຮັບຂຶ້ນທະບຽນ ເລກໝາຍໂທລະສັບ;

5. **ຂໍ້ມູນການຂຶ້ນທະບຽນ** ໝາຍເຖິງ ຂໍ້ມູນສ່ວນຕົວຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຜູ້ທີ່ນຳໃຊ້ເລກໝາຍໂທລະສັບຕົວຈິງ ປະກອບມີ: ຊື່, ນາມສະກຸນ, ເພດ, ວັນເດືອນປີເກີດ, ທີ່ຢູ່, ຮູບຖ່າຍຕົວຈິງ, ເລກໝາຍໂທລະສັບ, ປະເພດບໍລິການ, ສຳເນົາເອກະສານຢັ້ງຢືນຕົວຕົນໃດໜຶ່ງ ແລະ ຂໍ້ມູນອື່ນໆ ຕາມການກຳນົດຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

6. **ອຸປະກອນການຜະລິດ** ໝາຍເຖິງ ອຸປະກອນທີ່ນຳໃຊ້ເລກໝາຍໂທລະສັບເພື່ອຈຸດປະສົງໃດໜຶ່ງຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ ເຊັ່ນວ່າ ແທັບເລັດ, ອຸປະກອນຊັບພະສິ່ງ (IoT), ອຸປະກອນການຂາຍ (PoS-Point of Sell) ແລະ ອື່ນໆ;

**ມາດຕາ 4 ຫຼັກການໃນການຂຶ້ນທະບຽນເລກໝາຍໂທລະສັບ**

ການຂຶ້ນທະບຽນເລກໝາຍໂທລະສັບໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນໃຫ້ມີຄວາມສະດວກ, ວ່ອງໄວ ແລະ ໂປ່ງໃສ ໃນການຂຶ້ນທະບຽນເລກໝາຍໂທລະສັບຢ່າງຖືກຕ້ອງ, ຄົບຖ້ວນ ແລະ ສຳເລັດ;
2. ຮັບປະກັນໃຫ້ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຫັນເປັນດິຈິຕອນ;
3. ຮັບປະກັນທຸກເລກໝາຍໂທລະສັບ ຕ້ອງໄດ້ຮັບການຂຶ້ນທະບຽນຜ່ານລະບົບທີ່ກະຊວງ ເຕັກໂນໂລຊີ ແລະ ສື່ສານ ກຳນົດໃຫ້ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ກ່ອນຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ເປີດໃຫ້ຜູ້ນຳໃຊ້ ສາມາດໃຊ້ບໍລິການຕ່າງໆຂອງຕົນໄດ້;
4. ຮັບປະກັນ ຄຸ້ມຄອງຖານຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ມີຄວາມປອດໄພ ແລະ ເກັບຮັກສາຂໍ້ມູນ ເປັນຄວາມລັບ ໄວ້ໃນຖານຂໍ້ມູນຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ສະເພາະຂໍ້ມູນຂອງລູກຄ້າຕົນ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໃຫ້ບໍລິການ ແລະ ນຳໃຊ້ ເລກໝາຍໂທລະສັບຂອງ ສປປ ລາວ ໃນຂອບເຂດທົ່ວປະເທດ ແລະ ນຳໄປໃຊ້ໃນຕ່າງປະເທດ.

## ໝວດທີ 2

## ການຂຶ້ນທະບຽນເລກໝາຍໂທລະສັບ

**ມາດຕາ 6 ປະເພດຂອງເລກໝາຍໂທລະສັບຕ້ອງຂຶ້ນທະບຽນ**

ເລກໝາຍໂທລະສັບທີ່ຕ້ອງຂຶ້ນທະບຽນມີ ດັ່ງນີ້:

1. ເລກໝາຍໂທລະສັບມືຖື ທັງທີ່ເປັນ ແບບລາຍເດືອນ ແລະ ຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 (ທັງບໍລິການສຽງ ແລະ/ຫຼື ບໍລິການອິນເຕີເນັດ);
2. ເລກໝາຍໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030.

ທຸກເລກໝາຍໂທລະສັບ ຂອງ ສປປ ລາວ ຕ້ອງໄດ້ຂຶ້ນທະບຽນ ແລະ ປະກອບເອກະສານໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ຊັດເຈນ ຈຶ່ງອະນຸຍາດໃຫ້ຜູ້ໃຫ້ບໍລິການເປີດໃຫ້ນຳໃຊ້ໄດ້ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ການຂຶ້ນທະບຽນເລກໝາຍໂທລະຄົມມະນາຄົມ ຂອງກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງປີ 2021).

**ມາດຕາ 7 ຮູບແບບການຂຶ້ນທະບຽນເລກໝາຍໂທລະສັບ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຜູ້ທີ່ນຳໃຊ້ ເລກໝາຍໂທລະສັບແບບລາຍເດືອນ ແລະ ຕື່ມເງິນ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 020 ແລະ ໂທລະສັບຕັ້ງໂຕະແບບບໍ່ມີສາຍ ທີ່ມີເລກລະຫັດບໍລິການຂຶ້ນຕົ້ນດ້ວຍ 030 ທີ່ໄດ້ເປີດນຳໃຊ້ແລ້ວກ່ອນຂໍ້ຕົກລົງສະບັບນີ້ມີຜົນສັກສິດ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຕ້ອງຊຸກຍູ້ໃຫ້ຜູ້ນຳໃຊ້ມາຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ສຳເລັດກ່ອນວັນທີ 16 ທັນວາ 2023 ໂດຍ ຜ່ານຈຸດບໍລິການ ຫຼື ພລັດຟອມອອນລາຍ ໂດຍປະຕິບັດ ດັ່ງນີ້:

1. ຂຶ້ນທະບຽນຢູ່ຈຸດບໍລິການຂອງຜູ້ໃຫ້ບໍລິການດ້ວຍ ແອັບພລີເຄຊັນ 3 ແກຼັບ (3 Grab App) ສຳລັບບຸກຄົນ ແລະ ເວັບໄຊ https://kyc.simreg.gov.la ສຳລັບລູກຄ້າອົງກອນ ໂດຍຕ້ອງປະກອບຂໍ້ມູນສ່ວນຕົວໃສ່ແບບຟອມ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານກຳນົດ ແລະ ລໍຖ້າການແຈ້ງຜົນວ່າ ສຳເລັດ ຫຼື ບໍ່ສຳເລັດ ພາຍໃນ 3 ຊົ່ວໂມງ;

2. ຂຶ້ນທະບຽນດ້ວຍຕົນເອງ ຜ່ານພລັດຟອມອອນລາຍເຊັ່ນ: ແອັບພລີເຄຊັນ ລາວ ເຄວາຍຊີ (Lao KYC App) ຫຼື ຕາມທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານກຳນົດໃນແຕ່ລະໄລຍະ, ຊຶ່ງຜູ້ຂຶ້ນທະບຽນຕ້ອງປະກອບຂໍ້ມູນສ່ວນຕົວໃສ່ຕາມແບບຟອມທີ່ກຳນົດໄວ້ໃນລະບົບ ເພື່ອຂຶ້ນທະບຽນເລກໝາຍ

ໂທລະສັບ ແລະ ລໍຖ້າການແຈ້ງຜົນ ວ່າສໍາເລັດ ຫຼື ບໍ່ສໍາເລັດ ຜ່ານທາງ ຂໍ້ຄວາມສັ້ນ (SMS) ຈາກເລກໝາຍໂທລະສັບມືຖື ພາຍໃນ 72 ຊົ່ວໂມງ ຫຼື 3 ວັນ.

ສໍາລັບການຈໍາໜ່າຍ ແລະ ເປີດນໍາໃຊ້ເລກໝາຍໂທລະສັບໃໝ່ ຫຼັງຈາກຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແມ່ນຕ້ອງຈໍາໜ່າຍ ແລະ ຂຶ້ນທະບຽນເລກໝາຍໂທລະສັບ ຜ່ານຈຸດບໍລິການຂອງຜູ້ໃຫ້ບໍລິການກໍານົດໄວ້ເທົ່ານັ້ນ.

**ມາດຕາ 8 ການກວດຜົນການຂຶ້ນທະບຽນເລກໝາຍໂທລະສັບ**

ຊ່ອງທາງການກວດ ຜົນການຂຶ້ນທະບຽນ ມີດັ່ງນີ້:

1. ກວດຜົນຜ່ານລະບົບ ຢູເອັດສເອັດສດີ (USSD) ດ້ວຍລະຫັດ *1021#;
2. ກວດຜົນຜ່ານແອັບພລິເຄຊັນ ລາວເຄວາຍຊີ (Lao KYC App) ຫຼື ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານກໍານົດ ໃນແຕ່ລະໄລຍະ;
3. ຜ່ານທາງເວັບໄຊ https://kyc.simreg.gov.la ຫຼື ຜ່ານເວັບໄຊ ທີ່ກະຊວງ ເຕັກໂນໂລຊີ ແລະ ການສື່ສານກໍານົດ ໃນແຕ່ລະໄລຍະ.

ການແຈ້ງຜົນການຂຶ້ນທະບຽນ ຜ່ານແຕ່ລະຊ່ອງທາງ ຜູ້ໃຫ້ບໍລິການ ຕ້ອງຮັບປະກັນຄວາມລັບຂໍ້ມູນຂອງຜູ້ນໍາໃຊ້ບໍລິການຕາມ ກົດໝາຍ ແລະ ລະບຽບການ.

**ມາດຕາ 9 ປະເພດເອກະສານ ການຂຶ້ນທະບຽນເລກໝາຍໂທລະສັບ**

ປະເພດເອກະສານ ການຂຶ້ນທະບຽນເລກໝາຍໂທລະສັບ ມີດັ່ງນີ້:

1. **ກໍລະນີ ບຸກຄົນ ຕ້ອງນໍາໃຊ້ເອກະສານໃດໜຶ່ງທີ່ບໍ່ໝົດອາຍຸ ດັ່ງລຸ່ມນີ້:**

1.1. ບັດປະຈໍາຕົວ.

1.2. ສໍາມະໂນຄົວ.

1.3. ໜັງສືຜ່ານແດນ (Passport).

1.4. ບັດປະຈໍາຕົວພະສົງ.

1.5. ບັດປະຈໍາຕົວຕ່າງດ້າວ.

1.6. ສໍາມະໂນຄົວພະສົງ.

1.7. ສໍາມະໂນຄົວຕ່າງດ້າວ.

1.8. ບັດລັດຖະກອນ.

1.9. ບັດພະນັກງານບໍານານ.

1.10. ບັດປະຈໍາຕົວນັກສຶກສາ.

1.11. ໃບຂັບຂີ່ຍານພາຫະນະ.

1.12. ໃບຢັ້ງຢືນທີ່ຢູ່ຈໍ້າໂປ້ລາຍນິ້ວມື.

ບຸກຄົນທີ່ມີອາຍຸຕໍ່າກວ່າ 15 ປີ ສາມາດນໍາໃຊ້ເລກໝາຍໂທລະສັບໄດ້ ແຕ່ຕ້ອງໃຫ້ຜູ້ປົກຄອງເປັນຜູ້ຂຶ້ນທະບຽນເລກໝາຍໂທລະສັບ ໂດຍປະກອບເອກະສານສໍາມະໂນຄົວເພື່ອມາຢັ້ງຢືນ.

**2. ກໍລະນີ ນິຕິບຸກຄົນ ຕ້ອງປະກອບເອກະສານ ດັ່ງລຸ່ມນີ້:**

2.1. ໜັງສືມອບສິດ ຈາກຜູ້ອໍານວຍການບໍລິສັດ;

2.2. ສໍາເນົາເອກະສານໃດໜຶ່ງຂອງຜູ້ອໍານວຍການບໍລິສັດ ເຊັ່ນ: ບັດປະຈໍາຕົວ ຫຼື ສໍາມະໂນຄົວ ຫຼື ໜັງສືຜ່ານແດນ;

2.3. ຮູບຖ່າຍຂອງຜູ້ອໍານວຍການບໍລິສັດ ຂະໜາດ 3x4 ຈໍານວນ 2 ໃບ;

2.4. ສໍາເນົາໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນຂອງວິສາຫະກິດ;

2.5. ສໍາເນົາໃບຢັ້ງຢືນການມອບອາກອນ;

2.6. ແຈ້ງລາຍການເລກໝາຍໂທລະສັບທຸກເລກໝາຍ ພ້ອມຂໍ້ມູນຄົບຖ້ວນຂອງຜູ້ທີ່ຈະນໍາໃຊ້ ໄດ້ແກ່ ຊື່, ນາມສະກຸນ, ເພດ, ວັນເດືອນປີເກີດ, ທີ່ຢູ່ປະຈຸບັນ, ຕໍາແໜ່ງງານ;

2.7. ເອກະສານອື່ນຕາມການກໍານົດຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

**3. ກໍລະນີ ອົງການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ຕ້ອງປະກອບເອກະສານ ດັ່ງລຸ່ມນີ້:**

3.1. ໜັງສືສະເໜີເປັນທາງການ ຈາກອົງການຈັດຕັ້ງ;

3.2. ແຈ້ງລາຍການເລກໝາຍໂທລະສັບທຸກເລກໝາຍ ພ້ອມຂໍ້ມູນຄົບຖ້ວນຂອງຜູ້ທີ່ຈະນໍາໃຊ້ ໄດ້ແກ່ ຊື່, ນາມສະກຸນ, ເພດ, ວັນເດືອນປີເກີດ, ທີ່ຢູ່ປະຈຸບັນ, ຕໍາແໜ່ງງານ;

3.3. ສໍາເນົາເອກະສານໃດໜຶ່ງຂອງຫົວໜ້າອົງການຈັດຕັ້ງ ທີ່ມອບສິດຂຶ້ນທະບຽນເລກໝາຍໂທລະສັບ ເຊັ່ນ: ບັດປະຈໍາຕົວ, ສໍາມະໂນຄົວ, ໃບຢັ້ງຢືນທີ່ຢູ່, ໜັງສືຜ່ານແດນ (Passport);

3.4. ຮູບຖ່າຍຂອງຫົວໜ້າອົງການຈັດຕັ້ງ ຂະໜາດ 3x4 ຈໍານວນ 2 ໃບ;

3.5. ເອກະສານອື່ນຕາມການກໍານົດຂອງ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

ໃນເວລາມາຂຶ້ນທະບຽນທັງ 03 ກໍລະນີ ຂ້າງເທິງໃຫ້ຖືເອກະສານສະບັບແທ້ມາເພື່ອຢັ້ງຢືນເທົ່ານັ້ນ ແລະ ໃຫ້ຜູ້ໃຫ້ບໍລິການເກັບມ້ຽນສະເພາະເອກະສານທີ່ຕ້ອງສະໜອງເປັນສໍາເນົາເທົ່ານັ້ນ.

**ມາດຕາ 10 ຈໍານວນເລກໝາຍທີ່ກໍານົດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດຂຶ້ນທະບຽນໄດ້ໃນຈໍານວນ ດັ່ງນີ້:

1. ບຸກຄົນໜຶ່ງ ບໍ່ເກີນ 5 ເລກໝາຍ;
2. ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃດໜຶ່ງ ທີ່ຕ້ອງການຂຶ້ນທະບຽນນໍາໃຊ້ ໃຫ້ແກ່ພະນັກງານຂອງຕົນ ແມ່ນບໍ່ເກີນ 50 ເລກໝາຍ ແລະ ສໍາລັບນໍາໃຊ້ເຂົ້າໃນອຸປະກອນການຜະລິດຂອງຕົນ ແມ່ນບໍ່ເກີນ 100 ເລກໝາຍ;

ກໍລະນີ ຕ້ອງການເພີ່ມຈຳນວນ ນອກເໜືອທີ່ກຳນົດໄວ້ ຕ້ອງສະເໜີຕໍ່ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ເພື່ອພິຈາລະນາຕາມແຕ່ລະກໍລະນີທີ່ຈຳເປັນຕົວຈິງ ຫຼັງຈາກນັ້ນ ຈຶ່ງອະນຸຍາດໃຫ້ຂຶ້ນທະບຽນ ແລະ ເປີດນຳໃຊ້ ຕາມລຳດັບ.

## ໝວດທີ 3
## ຈຸດບໍລິການ

### ມາດຕາ 11 ຈຸດບໍລິການ

ຈຸດບໍລິການ ແມ່ນປ້ອງບໍລິການ ປ້ອງບໍລິການຂອງບໍລິສັດຜູ້ໃຫ້ບໍລິການ ຫຼື ສະຖານທີ່ບໍລິການ ທີ່ໄດ້ຮັບອະນຸຍາດຈາກບັນດາບໍລິສັດ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ເພື່ອຈຳໜ່າຍ ແລະ ຮັບຂຶ້ນທະບຽນ ເລກໝາຍໂທລະສັບ ຊຶ່ງມີເງື່ອນໄຂຕາມທີ່ກຳນົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 12 ເງື່ອນໄຂຂອງຈຸດບໍລິການ

ຈຸດບໍລິການ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີເລກລະຫັດປະຈຳຕົວຂອງຈຸດບໍລິການ ທີ່ອອກໂດຍຜູ້ໃຫ້ບໍລິການ ເພື່ອໃຫ້ສາມາດ ຄຸ້ມຄອງ, ຕິດຕາມ ແລະ ກວດກາໄດ້;
2. ມີພະນັກງານຮັບຜິດຊອບທີ່ຜ່ານການຝຶກອົບຮົມ ກ່ຽວກັບ ຂັ້ນຕອນ, ວິທີການຂຶ້ນທະບຽນເລກໝາຍໂທລະສັບ ຈາກຜູ້ໃຫ້ບໍລິການ;
3. ມີອຸປະກອນຮອງຮັບ ການຂຶ້ນທະບຽນເລກໝາຍໂທລະສັບ;
4. ເງື່ອນໄຂອື່ນໆທີ່ຈຳເປັນ ສຳລັບການຂຶ້ນທະບຽນເລກໝາຍໂທລະສັບ.

## ໝວດທີ 4
## ສິດ ແລະ ພັນທະ

### ມາດຕາ 13 ສິດຂອງຜູ້ໃຫ້ບໍລິການ

ຜູ້ໃຫ້ບໍລິການ ມີສິດ ດັ່ງນີ້:

1. ຈຳໜ່າຍເລກໝາຍໂທລະສັບ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໂດຍສອດຄ່ອງກັບຂໍ້ຕົກລົງສະບັບນີ້;
2. ປິດການນຳໃຊ້ເລກໝາຍໂທລະສັບ ທີ່ບໍ່ປະຕິບັດຕາມເງື່ອນໄຂ ການໃຫ້ບໍລິການຂອງຜູ້ໃຫ້ບໍລິການ;
3. ເກັບຄືນເລກໝາຍໂທລະສັບ ທີ່ບໍ່ປະຕິບັດຕາມເງື່ອນໄຂການໃຫ້ບໍລິການ ທີ່ເກີນ 180 ວັນ;
4. ທວງຖາມຂໍ້ມູນເພີ່ມເຕີມ ໃນກໍລະນີ ຂໍ້ມູນ ຫຼື ເອກະສານການຂຶ້ນທະບຽນ ບໍ່ຖືກຕ້ອງ ຫຼື ບໍ່ຊັດເຈນ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 14 ພັນທະຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການ ມີພັນທະ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ຊຸກຍູ້ ແລະ ສົ່ງເສີມ ວຽກງານການຂຶ້ນທະບຽນ ໃຫ້ຜູ້ນຳໃຊ້ມີຄວາມເຂົ້າໃຈ ແລະ ເຫັນໄດ້ຄວາມສຳຄັນຂອງການຂຶ້ນທະບຽນເລກໝາຍໂທລະສັບ;
2. ສ້າງຈຸດບໍລິການເພື່ອອຳນວຍຄວາມສະດວກໃນການຂຶ້ນທະບຽນເລກໝາຍໂທລະສັບ;
3. ຕ້ອງຮັບປະກັນການຂຶ້ນທະບຽນເລກໝາຍໂທລະສັບໃຫ້ ຖືກຕ້ອງ ແລະ ສຳເລັດ ແລ້ວຈຶ່ງເປີດໃຫ້ນຳໃຊ້ໄດ້;
4. ຮັບຜິດຊອບຕໍ່ໜ້າກົດໝາຍໃນການເຄື່ອນໄຫວຂອງຈຸດບໍລິການທີ່ຈຳໜ່າຍ ແລະ ຂຶ້ນທະບຽນເລກໝາຍໂທລະສັບ ບໍ່ຖືກຕ້ອງ ແລະ ບໍ່ສຳເລັດ;
5. ຕ້ອງຮັບປະກັນຄວາມປອດໄພ ການເຊື່ອມຕໍ່ ແລະ ການນຳໃຊ້ຢ່າງມີປະສິດທິພາບ;
6. ຕ້ອງຮັບປະກັນການເກັບຮັກສາຖານຂໍ້ມູນຂຶ້ນທະບຽນຂອງຜູ້ນຳໃຊ້ໃຫ້ມີຄວາມຖືກຕ້ອງ, ຄົບຖ້ວນ, ປອດໄພ ແລະ ປິດລັບ;
7. ສ້າງລະບົບເກັບກຳຂໍ້ມູນຜູ້ນຳໃຊ້ເປັນຂອງຕົນເອງ ແລະ ມີຖານຂໍ້ມູນການຂຶ້ນທະບຽນສຳຮອງໃນຮູບແບບເອເລັກໂຕຣນິກໃດໜຶ່ງ;
8. ຝຶກອົບຮົມ, ແນະນຳສາຂາ ຫຼື ຈຸດບໍລິການຂອງຕົນ ໃຫ້ຮູ້ວິທີການຂຶ້ນທະບຽນເລກໝາຍໂທລະສັບ ແລະ ແນະນຳຜູ້ນຳໃຊ້;
9. ສົ່ງບົດສະຫຼຸບລາຍງານຜົນການຈຳໜ່າຍ, ການຂຶ້ນທະບຽນ ແລະ ການນຳໃຊ້ເລກໝາຍໂທລະສັບເປັນທາງການທຸກເດືອນ, ຫົກເດືອນ ແລະ ປີ ໃຫ້ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 15 ສິດຂອງຜູ້ນຳໃຊ້**

ຜູ້ນຳໃຊ້ ມີສິດ ດັ່ງນີ້:

1. ສະເໜີປ່ຽນແປງຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບຂອງຕົນ;
2. ໄດ້ຮັບການສະໜອງບໍລິການ ຢ່າງມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ຍຸຕິທຳ;
3. ສາມາດຂໍນຳໃຊ້ຂໍ້ມູນສ່ວນຕົວຂອງເລກໝາຍຕົນ ແລະ ອະນຸຍາດໃຫ້ພາກສ່ວນອື່ນນຳໃຊ້ຂໍ້ມູນສ່ວນຕົວຂອງຕົນ ທີ່ໄດ້ຂຶ້ນທະບຽນສຳເລັດ ເພື່ອຈຸດປະສົງໃດໜຶ່ງ;
4. ໂອນເລກໝາຍໂທລະສັບຂອງຕົນໃຫ້ຜູ້ອື່ນນຳໃຊ້ ໂດຍມີການຂຶ້ນທະບຽນນຳໃຊ້ຄືນໃໝ່ ຕາມກົດໝາຍ ແລະ ລະບຽບການ ກຳນົດໄວ້;
5. ສາມາດຂໍເປີດນຳໃຊ້ເລກໝາຍໂທລະສັບທີ່ຖືກປິດຄືນໄດ້ ພາຍໃນ 90 ວັນ ຫຼັງຈາກມື້ທີ່ຖືກປິດໃນກໍລະນີທີ່ຂຶ້ນທະບຽນຢ່າງຖືກຕ້ອງ;
6. ຂໍຢຸດຕິການນຳໃຊ້ເລກໝາຍໂທລະສັບຂອງຕົນ ຕາມລະບຽບການຂອງຜູ້ໃຫ້ບໍລິການ;
7. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ພັນທະ ຂອງຜູ້ນໍາໃຊ້**

ຜູ້ນໍາໃຊ້ ມີພັນທະ ດັ່ງນີ້:

1. ຕ້ອງຂຶ້ນທະບຽນເລກໝາຍໂທລະສັບ ກ່ອນເປີດນໍາໃຊ້ ຢູ່ຈຸດບໍລິການທີ່ຖືກຕ້ອງຂອງຜູ້ໃຫ້ບໍລິການ;
2. ປະຕິບັດພັນທະໃນການໃຊ້ບໍລິການຕາມເງື່ອນໄຂຂອງຜູ້ໃຫ້ບໍລິການ;
3. ຮັບຜິດຊອບຕໍ່ໜ້າກົດໝາຍຂອງເລກໝາຍໂທລະສັບ ທີ່ຂຶ້ນທະບຽນນໍາໃຊ້ອອກຊື່ຕົນເອງ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 17 ຂໍ້ຫ້າມສໍາລັບຜູ້ໃຫ້ບໍລິການ**

ຫ້າມຜູ້ໃຫ້ບໍລິການ ມີພຶດຕິກໍາ ດັ່ງນີ້:

1. ເປີດນໍາໃຊ້ເລກໝາຍໂທລະສັບ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໂດຍບໍ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງ ແລະ ສໍາເລັດ ຢ່າງເດັດຂາດ;
2. ນໍາເຂົ້າເລກໝາຍໂທລະສັບຂອງຕ່າງປະເທດ ເພື່ອຈໍາໜ່າຍໃນ ສປປ ລາວ;
3. ເປີດເຜີຍຂໍ້ມູນຂຶ້ນທະບຽນຂອງຜູ້ນໍາໃຊ້ ໂດຍທີ່ບໍ່ໄດ້ຮັບອະນຸຍາດ;
4. ມອບ ແລະ/ຫຼື ໂອນ ລະຫັດນໍາໃຊ້ລະບົບຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ບຸກຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດ;
5. ປັບປຸງ ແລະ ປ່ຽນແປງ ຂໍ້ມູນການຂຶ້ນທະບຽນ.

**ມາດຕາ 18 ຂໍ້ຫ້າມສໍາລັບຜູ້ນໍາໃຊ້**

ຫ້າມຜູ້ໃຊ້ບໍລິການ ມີພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ເລກໝາຍໂທລະສັບ ໂດຍບໍ່ໄດ້ຂຶ້ນທະບຽນ;
2. ນໍາໃຊ້ເລກໝາຍໂທລະສັບ ເພື່ອກໍ່ຄວາມວຸ້ນວາຍໃນສັງຄົມ ແລະ ສິ່ງຜົນກະທົບຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
3. ນໍາເຂົ້າເລກໝາຍໂທລະສັບຂອງຕ່າງປະເທດເພື່ອຈໍາໜ່າຍໃນ ສປປ ລາວ;
4. ຫ້າມປະຊາຊົນລາວ ນໍາໃຊ້ເລກໝາຍໂທລະສັບ ຂອງຕ່າງປະເທດໃນ ສປປ ລາວ, ຍົກເວັ້ນ ຄົນຕ່າງປະເທດ ທີ່ນໍາໃຊ້ເລກໝາຍໂທລະສັບ ເປີດນໍາໃຊ້ບໍລິການໂທຂ້າມແດນອັດຕະໂນມັດ (International roaming);
5. ມອບ ແລະ/ຫຼື ໂອນເລກໝາຍໂທລະສັບຂອງຕົນທີ່ຂຶ້ນທະບຽນແລ້ວ ໃຫ້ບຸກຄົນອື່ນໂດຍບໍ່ຂຶ້ນທະບຽນຄືນໃໝ່ໃຫ້ຖືກຕ້ອງກັບຂໍ້ມູນຜູ້ນໍາໃຊ້ຕົວຈິງ;

6. ຮັບຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
7. ຫ້າມຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
8. ບໍ່ໃຫ້ການຮ່ວມມື ໃນການປະຕິບັດວຽກງານຂຶ້ນທະບຽນເລກໝາຍໂທລະສັບ;
9. ປອມແປງເອກະສານ ຫຼື ຂໍ້ມູນ ເພື່ອມາຂຶ້ນທະບຽນເລກໝາຍໂທລະສັບ.

## ໝວດທີ 6
## ອົງການຄຸ້ມຄອງ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບ

### ມາດຕາ 19 ອົງການຄຸ້ມຄອງການຂຶ້ນທະບຽນເລກໝາຍໂທລະສັບ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເປັນອົງການຄຸ້ມຄອງ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບ ໂດຍມີການສົມທົບກັບ ກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຂຶ້ນທະບຽນເລກໝາຍໂທລະສັບ.

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມອບໃຫ້ ອົງການຄົ້ນຄົມໂທລະຄົມມະນາຄົມ ເປັນເສນາທິການ ແລະ ເປັນເຈົ້າການໃນການຄຸ້ມຄອງ ຕິດຕາມ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບ.

### ມາດຕາ 20 ສິດ ແລະ ໜ້າທີ່ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີ ສ້າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
2. ຕິດຕາມ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບ ລວມທັງການຈັດຕັ້ງປະຕິບັດວຽກງານການຂຶ້ນທະບຽນເລກໝາຍໂທລະສັບໃນຂອບເຂດທົ່ວປະເທດ ເປັນແຕ່ລະໄລຍະ;
3. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງໃນການ ຂຶ້ນທະບຽນເລກໝາຍໂທລະສັບ ຕາມກົດໝາຍ ແລະ ລະບຽບການ;
4. ປະສານສົມທົບ, ແລກປ່ຽນ ແລະ ສະໜອງຂໍ້ມູນອັນຈຳເປັນ ໃນວຽກງານການຂຶ້ນທະບຽນເລກໝາຍໂທລະສັບ ທີ່ຕິດພັນກັບວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
5. ນຳໃຊ້ມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ ,ປັບໃໝ, ນຳສົ່ງຂໍ້ມູນໃຫ້ພາກສ່ວນກ່ຽວຂ້ອງ ສືບຕໍ່ດຳເນີນຕາມຂະບວນການຍຸຕິທຳ ຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ;

6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ການຂຶ້ນທະບຽນເລກໝາຍໂທລະສັບຕໍ່ລັດຖະບານ ຢ່າງເປັນປົກກະຕິ;
7. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ, ນາຍົກລັດຖະມົນຕີ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງອົງການດັດສົມໂທລະຄົມມະນາຄົມ**

ອົງການດັດສົມໂທລະຄົມມະນາຄົມມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ ແລະ ເປັນເຈົ້າການຈັດຕັ້ງປະຕິບັດ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ນິຕິກຳກ່ຽວກັບ ການຂຶ້ນທະບຽນເລກໝາຍໂທລະສັບ;
2. ໂຄສະນາ, ເຜີຍແຜ່ ແລະ ຊຸກຍູ້ ວຽກງານຂຶ້ນທະບຽນເລກໝາຍໂທລະສັບ ຢ່າງເປັນປົກກະຕິ;
3. ຄົ້ນຄ້ວາພິຈາລະນາ ອອກອະນຸຍາດການນຳໃຊ້ເລກໝາຍໂທລະສັບ ແກ່ຜູ້ໃຫ້ບໍລິການ;
4. ຕິດຕາມ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບຂອງຜູ້ໃຫ້ບໍລິການ;
5. ພັດທະນາ ແລະ ບຳລຸງຮັກສາ ລະບົບການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ສາມາດເຮັດວຽກໄດ້ຢ່າງປົກກະຕິ;
6. ຮັກສາຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ເປັນຄວາມລັບ;
7. ປະສານສົມທົບກັບບັນດາຜູ້ໃຫ້ບໍລິການ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດການຂຶ້ນທະບຽນເລກໝາຍໂທລະສັບ ຕາມກົດໝາຍ ແລະ ລະບຽບການ;
8. ນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ແລະ ຂໍ້ຕົກລົງສະບັບນີ້ດ້ວຍຮູບການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ແລະ ນຳສົ່ງຂໍ້ມູນໃຫ້ພາກສ່ວນກ່ຽວຂ້ອງສືບຕໍ່ດຳເນີນຕາມຂະບວນການຍຸຕິທຳຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ;
9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານ ການຂຶ້ນທະບຽນເລກໝາຍໂທລະສັບ ຕໍ່ຄະນະນຳກະຊວງເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງ ຄະນະນຳກະຊວງ ເຕັກໂນໂລຊີ ແລະ ການສື່ສານ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຜີຍແຜ່ ແລະ ຊຸກຍູ້ ການປະຕິບັດ ແຜນຍຸດທະສາດ, ນະໂຍບາຍ, ບັນດາກົດໝາຍ ແລະ ລະບຽບການກ່ຽວກັບ ການຂຶ້ນທະບຽນເລກໝາຍໂທລະສັບໃນຂັ້ນທ້ອງຖິ່ນຂອງຕົນ;
2. ໂຄສະນາ, ເຜີຍແຜ່ ວຽກງານຂຶ້ນທະບຽນເລກໝາຍໂທລະສັບ ຢ່າງເປັນປົກກະຕິ;
3. ຕິດຕາມ ແລະ ກວດກາ ການຈຳໜ່າຍ ແລະ ການຂຶ້ນທະບຽນເລກໝາຍໂທລະສັບຂອງຈຸດບໍລິການໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານການຂຶ້ນທະບຽນເລກໝາຍໂທລະສັບຕໍ່ອົງການ ດົດສົມໂທລະຄົມມະນາຄົມ ຢ່າງເປັນປົກກະຕິ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການຂຶ້ນທະບຽນເລກໝາຍໂທລະສັບ.**

ໃນການຄຸ້ມຄອງການຂຶ້ນທະບຽນເລກໝາຍໂທລະສັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງກັບການຂຶ້ນທະບຽນເລກໝາຍໂທລະສັບ ມີສິດ, ໜ້າທີ່ ໃນການປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບກະຊວງ ເຕັກໂນໂລຊີ ແລະ ການສື່ສານ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 24 ເນື້ອໃນການກວດກາ**

ການກວດກາການຂຶ້ນທະບຽນເລກໝາຍໂທລະສັບ ມີເນື້ອໃນ ດັ່ງນີ້:
1. ການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງ ແລະ ກວດກາ ການຂຶ້ນທະບຽນເລກໝາຍໂທລະສັບ;
3. ການເຄື່ອນໄຫວຂອງຜູ້ໃຫ້ບໍລິການກ່ຽວກັບການຂຶ້ນທະບຽນເລກໝາຍໂທລະສັບ ແລະ ການດໍາເນີນກິດຈະການອື່ນທີ່ປິ່ນອ້ອມ.

**ມາດຕາ 25 ຮູບແບບການກວດກາ**

ການກວດກາການຂຶ້ນທະບຽນເລກໝາຍໂທລະສັບມີ ສາມ ຮູບການ ດັ່ງນີ້:
1. ການກວດກາ ຕິດຕາມແບບປົກກະຕິ ຊຶ່ງແມ່ນການກວດກາ ທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີແຜນການແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍ ທີ່ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 7

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 26 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການຂຶ້ນທະບຽນເລກໝາຍໂທລະສັບໃຫ້ສຳເລັດ ແລະ ຖືກຕ້ອງຄົບຖ້ວນສາມາດກວດສອບໄດ້, ການປະຕິບັດຕາມຄຳສັ່ງ, ແຈ້ງການ, ຄຳແນະນຳ ກ່ຽວກັບການ ການຂຶ້ນທະບຽນເລກໝາຍໂທລະສັບ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 27 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ແລະ ນຳສົ່ງເພື່ອດຳເນີນຂະບວນການຍຸຕິທຳຕາມກົດໝາຍ, ລະບຽບການກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້.

### ມາດຕາ 28 ມາດຕະການປັບໃໝ

ຜູ້ໃຫ້ບໍລິການ ແລະ ຜູ້ນຳໃຊ້ ຈະຖືກດຳເນີນການປັບໃໝ ໃນກໍລະນີ ດັ່ງນີ້:

1. ສຳລັບຜູ້ໃຫ້ບໍລິການ:

1.1. ເປີດນຳໃຊ້ເລກໝາຍໂທລະສັບ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໂດຍບໍ່ໄດ້ຂຶ້ນທະບຽນເລກໝາຍໂທລະສັບຢ່າງຖືກຕ້ອງ ຈະຖືກປັບໃໝ 1.000.000 ກີບ/ເລກໝາຍ;

1.2. ນຳເຂົ້າ ເລກໝາຍໂທລະສັບຂອງຕ່າງປະເທດເພື່ອຈຳໜ່າຍ ຈະຖືກປັບໃໝ 5.000.000 ກີບ/ເລກໝາຍ;

1.3. ເປີດເຜີຍຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບຂອງຜູ້ນຳໃຊ້ ໂດຍທີ່ບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 3.000.000 ກີບ/ເລກໝາຍ;

1.4. ມອບ ແລະ ໂອນ ລະຫັດນຳໃຊ້ລະບົບຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ບຸກຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 5.000.000 ກີບ/ເລກໝາຍ;

1.5. ປັບປຸງ ແລະ ປ່ຽນແປງ ຂໍ້ມູນການຂຶ້ນທະບຽນເລກໝາຍໂທລະສັບ ຈະຖືກປັບໃໝ 3.000.000 ກີບ/ເລກໝາຍ.

2. ສຳລັບຜູ້ນຳໃຊ້:

2.1. ນຳໃຊ້ເລກໝາຍໂທລະສັບ ໂດຍບໍ່ໄດ້ຂຶ້ນທະບຽນ ບໍ່ຖືກຕ້ອງ ຈະຖືກປັບໃໝ 1.000.000 ກີບ/ເລກໝາຍ;

2.2. ນຳໃຊ້ເລກໝາຍໂທລະສັບ ເພື່ອກໍ່ຄວາມວຸ້ນວາຍໃນສັງຄົມ ແລະ ສິ່ງຜົນກະທົບຕໍ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຈະຖືກປັບໃໝ 10.000.000 ກີບ/ເລກໝາຍ;

2.3. ນຳເຂົ້າ ເລກໝາຍໂທລະສັບຂອງຕ່າງປະເທດເພື່ອຈຳໜ່າຍ ຈະຖືກປັບໃໝ 5.000.000 ກີບ/ເລກໝາຍ;

2.4. ມອບ ແລະ ໂອນເລກໝາຍໂທລະສັບຂອງຕົນທີ່ຂຶ້ນທະບຽນແລ້ວ ໃຫ້ບຸກຄົນອື່ນໂດຍບໍ່ຂຶ້ນທະບຽນຄືນໃໝ່ໃຫ້ຖືກຕ້ອງກັບຂໍ້ມູນຜູ້ນຳໃຊ້ຕົວຈິງ ຈະຖືກປັບໃໝ 1.000.000 ກີບ/ເລກໝາຍ;

2.5. ຮັບຂຶ້ນທະບຽນເລກໝາຍໂທລະສັບ ໃຫ້ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 1.000.000 ກີບ/ເລກໝາຍ;

2.6. ບໍ່ໃຫ້ການຮ່ວມມື ໃນການປະຕິບັດວຽກງານຂຶ້ນທະບຽນເລກໝາຍໂທລະສັບ ຈະຖືກປັບໃໝ 1.000.000 ກີບ/ເລກໝາຍ;

2.7. ປອມແປງເອກະສານ ຫຼື ຂໍ້ມູນ ເພື່ອມາຂຶ້ນທະບຽນເລກໝາຍໂທລະສັບ ຈະຖືກປັບໃໝ 1.000.000 ກີບ/ເລກໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ ອົງການດັດສົມໂທລະຄົມມະນາຄົມ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງທີ່ໄດ້ລົງລາຍເຊັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍ ການຂຶ້ນທະບຽນເລກໝາຍໂທລະສັບ ເລກທີ 903/ປທສ, ວັນທີ 30 ມີນາ 2020.

ລັດຖະມົນຕີ

ບໍ່ວຽງຄຳ ວົງດາລາ